ມາດຕະຖານແຫ່ງຊາດ ສຳລັບການແກ້ໄຂບັນຫາລະເບີດບໍ່ທັນແຕກ

ທີ່ຕົກຄ້າງຢູ່ ສປປ ລາວ

# ບົດທີ 20

# ການປະເມີນຜົນພາຍຫຼັງການເກັບກູ້

ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊກລ) ກ່ຽວກັບ
ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

15 ຕຸລາ 2012

# ສາລະບານ

ສາລະບານ ....................2
ບັນທຶກການດັດແກ້ ....................3
ການປະເມີນຜົນພາຍຫຼັງການເກັບກ ....................4
1. ບົດນຳ ....................4
2. ຂອບເຂດ ....................4
3. ນິຍາມຄຳສັບ....................4
4. ຈຸດປະສົງການປະເມີນຜົນພາຍຫຼັງການເກັບກູ້ ....................4
5. ຂໍ້ກຳນົດໃນການປະເມີນຜົນພາຍຫຼັງການເກັບກູ້ ....................5
6. ຈຸດປະສົງການປະເມີນຜົນພາຍຫຼັງການເກັບກູ້ ....................5
6.1. ການປະເມີນຜົນພາຍຫຼັງການເກັບກູ້ໃນຂັ້ນຍຸດທະສາດ ....................5
6.2. ການປະເມີນຜົນພາຍຫຼັງການເກັບກູ້ໃນຂັ້ນການປະຕິບັດງານ....................6
7. ການປະຕິບັດການປະເມີນຜົນພາຍຫຼັງການເກັບກູ້ ....................6
8. ການລາຍງານຂໍ້ມູນກ່ຽວກັບການປະເມີນຜົນພາຍຫຼັງການເກັບກູ້ ....................6
9. ການປະຕິບັດຕໍ່ຂໍ້ມູນການປະເມີນຜົນພາຍຫຼັງການເກັບກູ້ ....................7
ເອກະສານຊ້ອນທ້າຍ ກ ຕົວກຳນົດການປ່ຽນແປງຕໍ່ມາດຕະການຜົນກະທົບມາຈາກການເກັບກູ້ລະເບີດ ....................8

## ບັນທຶກການດັດແກ້

### ການຄຸ້ມຄອງການດັດແກ້ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດແຫ່ງ ສປປ ລາວ

ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຈະມີການທົບທວນຄືນເປັນທາງການ 3 ປີຕໍ່ຄັ້ງ. ຖ້າຫາກມີຄວາມຈຳເປັນກໍ່ສາມາດທົບທວນກ່ອນກຳນົດໄດ້ ເປັນຕົ້ນແມ່ນບັນຫາກ່ຽວກັບຄວາມປອດໄພ ແລະ ປະສິດທິພາບຂອງການປະຕິບັດງານ ຫຼື ສຳລັບຈຸດປະສົງເພື່ອດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ. ຖ້າມີການດັດແກ້ແມ່ນໃຫ້ໃສ່ເລກທີ, ວັນທີ ແລະ ລາຍລະອຽດຂອງການດັດແກ້ໃສ່ໃນຕາຕະລາງທີ່ກຳນົດຢູ່ລຸ່ມນີ້.

ເມື່ອສຳເລັດການທົບທວນມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຢ່າງເປັນທາງການແລ້ວ ກໍ່ຈະໄດ້ເຜີຍແຜ່ໃຫ້ນຳໃຊ້. ຂໍ້ດັດແກ້ຕ່າງໆທີ່ມີຢູ່ໃນສະບັບດັດແກ້ກ່ອນໜ້ານັ້ນ ຈະຕ້ອງໄດ້ລວມເຂົ້າໄວ້ໃນສະບັບດັດແກ້ໃໝ່ເລີຍ ແລະ ໃຫ້ລຶບອອກຈາກຕາຕະລາງບັນທຶກການດັດແກ້. ຈາກນັ້ນ ກໍໃຫ້ເລີ່ມຕັ້ງຕົ້ນບັນທຶກການດັດແກ້ໃໝ່ຈົນກວ່າຈະມີການທົບທວນຄືນໃນຄັ້ງຕໍ່ໄປອີກ.

| ເລກທີ | ວັນທີ | ລາຍລະອຽດການດັດແກ້ |
|---|---|---|
| 1 | 30 ມິຖຸນາ 11 | ຂໍ້ 1, ປ່ຽນແປງຄຳສັບຈຸດນ້ອຍໆທັງສອງວັກ.<br>ຂໍ້ 3, ລຶບຄຳສັບ 'ວິຊາການ' ຢູ່ທາງໜ້າຄຳວ່າ 'ການສຳຫຼວດ' ຢູ່ສາມບ່ອນ, ປ່ຽນແປງຄຳສັບຢູ່ວັກທີສາມ.<br>ເພີ່ມໝາຍເຫດໃໝ່ຢູ່ທາງທ້າຍ.<br>ຂໍ້ 4, ປ່ຽນແປງຄຳສັບຈຸດນ້ອຍໆ.<br>ຂໍ້ 5, ປ່ຽນແປງຄຳສັບຫຼາຍໆຈຸດ.<br>ຂໍ້ 6, ປ່ຽນແປງຄຳສັບຫຼາຍໆຈຸດ.<br>ຂໍ້ 7 (ສະບັບເກົ່າ), ວັກທຳອິດປ່ຽນມາຢູ່ໃນຂໍ້ 6, ວັກຍ່ອຍ ກ ແລະ ຂ ຍ້າຍໄປຢູ່ໃນເອກະສານຊ້ອນທ້າຍ ກ.<br>ຂໍ້ 8 ((ສະບັບເກົ່າ) ລຶບອອກ.<br>ຂໍ້ 9 ((ສະບັບເກົ່າ), ປ່ຽນເປັນ ຂໍ້ 7 (ສະບັບໃໝ່) ປ່ຽນແປງຄຳສັບ.<br>ຂໍ້ 10 ((ສະບັບເກົ່າ), ປ່ຽນເປັນ ຂໍ້ 8 (ສະບັບໃໝ່). ປ່ຽນແປງຈຸດນ້ອຍໆຢູ່ວັກທີສອງ.<br>ຂໍ້ 11 ((ສະບັບເກົ່າ), ປ່ຽນເປັນ ຂໍ້ 9 (ສະບັບໃໝ່).<br>ເພີ່ມເອກະສານຊ້ອນທ້າຍ ກ ໃໝ່. |
| | | |
| | | |
| | | |
| | | |
| | | |
| | | |
| | | |

# ການປະເມີນຜົນພາຍຫຼັງການເກັບກູ້

## 1. ບົດນຳ

ການເກັບກູ້ລະເບີດເພື່ອຈຸດປະສົງດ້ານມະນຸດສະທຳ ແລະ ການພັດທະນາ ໃນ ສປປ ລາວ ແມ່ນເພື່ອສະໜັບສະໜູນໃຫ້ແກ່ການປະຕິບັດແຜນຍຸດທະສາດ ແລະ ແຜນການຕ່າງໆຂອງລັດຖະບານແຫ່ງ ສປປ ລາວ ຊຶ່ງແນໃສ່ສະໜັບສະໜູນໃຫ້ແກ່ການພັດທະນາ ແລະ ຫຼຸດຜ່ອນຜົນກະທົບຈາກ ລບຕ ຕໍ່ເສດຖະກິດ-ສັງຄົມຂອງຊຸມຊົນ. ການເກັບກູ້ລະເບີດແມ່ນແນໃສ່ ຕອບສະໜອງເນື້ອທີ່ດິນທີ່ມີຄວາມປອດໄພຈາກ ລບຕ ເພື່ອນຳໃຊ້ເຂົ້າໃນວຽກງານສະເພາະໃດໜຶ່ງແລະ ຫຼຸດຜ່ອນຜົນກະທົບຈາກ ລບຕ ທີ່ມີຕໍ່ຊຸມຊົນ.

ຄຊກລ ມີຄວາມຮັບຜິດຊອບ ເພື່ອຮັບປະກັນໃຫ້ການເກັບກູ້ລະເບີດມີປະສິດທິຜົນ, ມີຄວາມປອດໄພ ແລະ ມີການນຳໃຊ້ຊັບພະຍາກອນປະຕິບັດງານເກັບກູ້ລະເບີດຢ່າງມີປະສິດທິພາບ. ເພື່ອຮັບປະກັນດ້ານປະສິດທິຜົນ ແລະ ຄວາມຖືກຕ້ອງກັບຈຸດປະສົງຂອງການເກັບກູ້ (ຕອບສະໜອງເນື້ອທີ່ດິນທີ່ມີຄວາມປອດໄພຈາກ ລບຕ ເພື່ອການນຳໃຊ້ ແລະ ຫຼຸດຜ່ອນຜົນກະທົບຈາກ ລບຕ) ຄວນຈະສາມາດວັດແທກໄດ້. ການວັດແທກຄືດັ່ງກ່າວ ແມ່ນສາມາດເຮັດໄດ້ໂດຍ ຜ່ານຂະບວນ ການປະເມີນຜົນພາຍຫຼັງການເກັບກູ້.

## 2. ຂອບເຂດ

ໃນບົດການປະເມີນຜົນພາຍຫຼັງການເກັບກູ້ນີ້ໄດ້ກຳນົດລະບຽບໃນການດຳເນີນການປະເມີນຜົນພາຍຫຼັງການເກັບກູ້ຕໍ່ກັບໜ້າວຽກການປະຕິບັດງານ ເກັບກູ້ລະ ເບີດ ບໍ່ ທັນແຕກຢູ່ ສປປ ລາວ.

## 3. ນິຍາມຄຳສັບ

ຢູ່ໃນບົດການປະເມີນຜົນພາຍຫຼັງການເກັບກູ້ນີ້ແມ່ນນຳໃຊ້ກັບ "ວຽກເກັບກູ້ລະເບີດບໍ່ທັນແຕກ" ແລະ "ເນື້ອທີ່ດິນທີ່ໄດ້ເກັບກູ້ແລ້ວ"

ຄຳນິຍາມຂອງ "ການເກັບກູ້ລະເບີດບໍ່ທັນແຕກ" ແມ່ນລວມເອົາທັງ "ການສຳຫຼວດ" (ທີ່ເປັນອົງປະກອບໜຶ່ງຂອງການເກັບກູ້ລະເບີດ). ເພາະສະນັ້ນ ເວລາໃຊ້ຄຳວ່າ "ການເກັບກູ້ລະເບີດ ບໍ່ທັນແຕກ" ຢູ່ໃນມາດຕະຖານແຫ່ງຊາດບົດນີ້ ກໍໃຫ້ລວມເອົາ "ການສຳຫຼວດ" ນຳ.

ການສຳຫຼວດອາດຈະກຳນົດເນື້ອທີ່ດິນທີ່ສາມາດ "ອະນຸຍາດໃຫ້ນຳໃຊ້" ໂດຍບໍ່ຕ້ອງປະຕິບັດການເກັບກູ້ຢ່າງເຕັມຮູບແບບ. ນີ້ໝາຍຄວາມວ່າ "ເນື້ອທີ່ດິນທີ່ບໍ່ໄດ້ປະຕິບັດການ ເກັບກູ້" ແຕ່ຈັດເປັນ "ພື້ນທີ່ດິນ ທີ່ອະນຸຍາດ ໃຫ້ນຳໃຊ້". ເຖິງຢ່າງໃດກໍຕາມເມື່ອນຳໃຊ້ຄຳວ່າ "ພື້ນທີ່ດິນທີ່ໄດ້ເກັບກູ້ ແລ້ວ" ຢູ່ໃນບົດນີ້ຂອງມາດຕະຖານແຫ່ງຊາດ ກໍ່ໃຫ້ລວມເອົາ "ເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ " ນຳ.

ໝາຍເຫດ: ການເກັບກູ້ແບບຄົບຖ້ວນແມ່ນການເກັບກູ້ ລບຕ ທີ່ທຸກຂໍ້ກຳນົດຂອງການເກັບກູ້ໄດ້ບັນລຸຜົນ ນີ້ໝາຍຄວາມວ່າ ພື້ນທີ່ທັງໝົດທີ່ກຳນົດໃຫ້ມີການເກັບກູ້ ຕອ້ງໄດ້ຮັບການເກັບກູ້ຕາມຄວາມເລິກ ແລະ ຄຸນນະພາບຂອງການເກັບກູ້ທີ່ໄດ້ກຳນົດເອົາໄວ້.

## 4. ຈຸດປະສົງການປະເມີນຜົນພາຍຫຼັງການເກັບກູ້

ດັ່ງທີ່ໄດ້ກ່າວໄວ້ໃນບົດນຳແລ້ວວ່າ ການປະຕິບັດວຽກເກັບກູ້ລະເບີດບໍ່ທັນແຕກມີ 2 ຈຸດປະສົງຂອງຄື: ສະໜອງເນື້ອທີ່ດິນທີ່ມີຄວາມປອດໄພເພື່ອນຳໃຊ້ ແລະ ຫຼຸດຜ່ອນຜົນກະທົບຈາກ ລບຕ ທັງໝົດນີ້ກໍ່ເພື່ອຈຸດປະສົງຫຼຸດຜ່ອນຄວາມທຸກຍາກ. ເພື່ອວັດແທກວ່າການເກັບກູ້ບັນລຸຕາມຈຸດປະສົງຫຼືບໍ່ ຈຶ່ງຈຳເປັນຕ້ອງເຮັດການປະເມີນ ຜົນ ພາຍຫຼັງການເກັບກູ້.

## 5. ຂໍ້ກຳນົດໃນການປະເມີນຜົນພາຍຫຼັງການເກັບກູ້

ເນື່ອງຈາກໜ້າວຽກທຳລາຍເຄື່ອນທີ່ມີການຈັດຕັ້ງປະຕິບັດເປັນຈຳນວນຫຼາຍ ຢູ່ ສປປ ລາວ, ການປະເມີນຜົນພາຍຫຼັງການເກັບກູ້ ສຳລັບໜ້າວຽກດັ່ງກ່າວແມ່ນບໍ່ສາມາດປະຕິບັດໄດ້. ສະນັ້ນ ການປະເມີນຜົນພາຍຫຼັງການເກັບກູ້ຈຶ່ງຄວນປະຕິບັດສະເພາະເນື້ອທີ່ດິນເກັບກູ້ສຳເລັດ ເພື່ອຈຸດປະສົງດ້ານມະນຸດສະທຳ ຫຼື ເພື່ອການພັດທະນາ ແລະ ໜ້າວຽກທີ່ຕ້ອງໄດ້ເຮັດ **"ບົດລາຍງານການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ"**ເທົ່ານັ້ນ.

ໝາຍເຫດ: ເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ໂດຍການສຳຫຼວດ ແມ່ນຕ້ອງການໃຫ້ເຮັດ "ບົດລາຍງານການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ" ເຊັ່ນກັນ.

ເນື້ອທີ່ດິນທີ່ໄດ້ກຳນົດເພື່ອປະຕິບັດການເກັບກູ້ ລບຕ ຕ້ອງສອດຄ່ອງກັບ ບຸລິມະສິດໃນປະຈຸບັນ ຂອງ ລັດຖະບານແຫ່ງ ສປປ ລາວ. ເນື້ອທີ່ດິນດັ່ງກ່າວນີ້ແມ່ນ ອີງໃສ່ເງື່ອນໄຂໃນການກຳນົດຈຸດປະສົງຂອງການນຳໃຊ້ເນື້ອທີ່ດິນແບບມີແຜນການພາຍໃນ 6 ເດືອນ ພາຍຫຼັງສຳເລັດຈາກການເກັບກູ້. ໃຫ້ປະຕິບັດວຽກງານທີ່ພົວພັນກ່ຽວການປະເມີນຜົນພາຍຫຼັງການເກັບກູ້ໃນໄລຍະ 6 ເດືອນ.

ໝາຍເຫດ: ທຸກເນື້ອທີ່ໆໄດ້ກຳນົດໃຫ້ມີການເກັບກູ້ ຄວນຍົກສູງດ້ານຄຸນຄ່າ/ບູລິມະສິດ ເພື່ອໃຫ້ສອດຄ່ອງກັບເປົ້າໝາຍເກົ້າຂໍ້ ຂອງ ການພັດທະນາສະຫະສະວັດ ຂອງ ສປປ ລາວ, ສອດຄ່ອງກັບບຸລິມະສິດທີ່ກຳນົດໄວ້ໃນ ແຜນຍຸດທະສາດຂອງຂະແໜງປະຕິບັດງານດ້ານ ລບຕ ຫຼື ບຸລິມະສິດອື່ນໆທີ່ສະເພາະເຈາະຈົງໂດຍ ຄຊກລ.

## 6. ຈຸດປະສົງການປະເມີນຜົນພາຍຫຼັງການເກັບກູ້

ການປະເມີນຜົນພາຍຫຼັງການເກັບກູ້ແມ່ນມີຈຸດປະສົງທີ່ແຕກຕ່າງກັນສຳລັບຄວາມແຕກຕ່າງໃນການປະຕິບັດງານຂອງອົງການ ແລະ ໃນລະດັບໂຄງປະກອບຂອງລັດຖະບານ.

ຍຸດທະສາດດ້ານການປະເມີນຜົນພາຍຫຼັງການເກັບກູ້ ຄວນຈະສະໜອງຂໍ້ມູນຂ່າວສານທີ່ສະແດງໃຫ້ເຫັນເຖິງຜົນກະທົບ(ຫຼືບັນຫາອື່ນໆ) ທີ່ການເກັບກູ້ລະເບີດຄວນຈະມີກ່ຽວກັບແຜນພັດທະນາເສດຖະກິດແຫ່ງຊາດ ແລະ ຖ້າມີຄວາມຈຳເປັນຄວນອະນຸຍາດໃຫ້ມີການປັ່ງປແປງບຸລິມະສິດໃນການເກັບກູ້ລະເບີດ ແລະ ຜົນປະໂຫຍດທີ່ລະບຸໄວ້ໃນແຜນຍຸດທະສາດໃຫ້ນັບມື້ເພີ່ມທະວີຂຶ້ນ.

ການປະຕິບັດງານດ້ານການປະເມີນຜົນພາຍຫຼັງການເກັບກູ້ ຄວນຈະສະໜອງຂໍ້ມູນຂ່າວສານໃຫ້ແກ່ ຄຊກລ, ຄະນະ ກຳມະການປະສານງານດ້ານ ລບຕ ຂັ້ນແຂວງ/ເມືອງ, ບັນດາອົງການທີ່ໃຫ້ການສະໜັບສະໜູນການເກັບກູ້ ລບຕ ແລະ ອົງການເກັບກູ້ລະເບີດ ຈະຕ້ອງຢັ້ງຢືນ (ຫຼືຢ່າງອື່ນ) ວ່າເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ນັ້ນແມ່ນໄດ້ນຳໃຊ້ຖືກຕ້ອງຕາມຈຸດມຸ້ງໝາຍ ແລະ ພໍໃຈໃນຄຸນນະພາບຂອງການເກັບກູ້. ໃນລະດັບນີ້ການປະເມີນຜົນພາຍຫຼັງການເກັບກູ້ສະໜອງ ການຮັບປະກັນຄຸນນະພາບກ່ຽວກັບການວາງແຜນໜ້າວຽກການເກັບກູ້ ແລະ ຂະບວນການຈັດ ລຳດັບບູລິມະສິດ ລວມທັງ ການຄວບຄຸມຄຸນນະພາບຂອງໜ້າວຽກທີ່ໄດ້ປະຕິບັດສຳເລັດແລ້ວ.

ຄຊກລ ມີພາລະບົດບາດເປັນຈຸດໃຈກາງລະຫວ່າງການປະຕິບັດງານ ແລະ ແຜນຍຸດທະສາດໃນແຕ່ລະລະດັບ.

### 6.1. ການປະເມີນຜົນພາຍຫຼັງການເກັບກູ້ໃນຂັ້ນຍຸດທະສາດ

ກະຊວງແຜນການແລະການລົງທືນມີຄວາມຮັບຜິດຊອບໃນການຕິດຕາມ ຂໍ້ກຳນົດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ.

ຄຊກລຈະເຮັດວຽກຮ່ວມກັບກະຊວງແຜນການແລະການລົງທືນເພື່ອປະເມີນມູນຄ່າຜົນກະທົບຈາກການປະຕິ ບັດງານການເກັບກູ້ລະເບີດໂດຍອີງໃສ່ຖານຂໍ້ມູນການປະເມີນຜົນພາຍຫຼັງການເກັບກູ້ແລະແຫຼ່ງຂໍ້ມູນອື່ນໆ

ເອກະສານຊ້ອນທ້າຍ ກ ຢູ່ໃນບົດນີ້ແມ່ນບາງຕົວຢ່າງລາຍລະອຽດໃນການປັ່ງປແປງມາດຕະການຜົນກະທົບຕໍ່ການປະຕິບັດງານການເກັບກູລະເບີດ.

## 6.2. ການປະເມີນຜົນພາຍຫຼັງການເກັບກູ້ໃນຂັ້ນການປະຕິບັດງານ

ຈຸດປະສົງຂອງການປະເມີນຜົນພາຍຫຼັງການເກັບກູ້ໃນຂັ້ນການປະຕິບັດງານແມ່ນເພື່ອ:

ກ. ພິສູດວ່າ ເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ໄດ້ຖືກນຳໃຊ້ ແລະ ນຳໃຊ້ຖືກກັບຈຸດປະສົງບໍ. ຖ້າເນື້ອທີ່ດິນບໍ່ຖືກນຳໃຊ້ການປະເມີນຜົນພາຍຫຼັງການເກັບກູ້ຕ້ອງພິສູດ ແລະ ຊອກຫາເຫດຜົນທີ່ເນື້ອທີ່ດິນດັ່ງກ່າວບໍ່ຖືກນຳໃຊ້. ແຕ່ຖ້າເນື້ອທີ່ດິນຫາກຖືກນຳໃຊ້ເພື່ອຈຸດປະສົງຢ່າງອື່ນນອກເໜືອຈາກທີ່ກຳນົດໄວ້ໃນເບື້ອງຕົ້ນກໍ່ໃຫ້ບອກເຫດຜົນພ້ອມ.

ຂ. ພິສູດວ່າ ມີ ລບຕ ໃດໜຶ່ງໄດ້ພົບເຫັນໃນພື້ນທີ່ໆໄດ້ອະນຸຍາດໃຫ້ນຳໃຊ້ບໍ. ລາຍລະອຽດຂອງສະ ຖານທີ່ໆ ລບຕ ຖືກພົບ ແລະ ມາດຕະການທີ່ຊຸມຊົນໄດ້ປະຕິບັດຕໍ່ລະເບີດ ຈະຕ້ອງລາຍງານດ້ວຍ.

ຄ. ພິສູດຄວາມຕ້ອງການຂອງຊຸມຊົນໃນຕໍ່ໜ້າກັບວຽກງານເກັບກູ້ລະເບີດເຊັ່ນ ໃນການເກັບກູ້, ການສຶກສາຄວາມສ່ຽງໄພຈາກ ລບຕ/ກັບລະເບີດຝັງດິນ ຫຼື ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

## 7. ການປະຕິບັດການປະເມີນຜົນພາຍຫຼັງການເກັບກູ້

ລະບຽບການ ແລະ ຂັ້ນຕອນການປະຕິບັດການປະເມີນຜົນພາຍຫຼັງການເກັບກູ້ ທີ່ຈະສະໜອງຂໍ້ມູນເພື່ອປະເມີນຜົນກະທົບໃນຂັ້ນຍຸດທະສາດ ແມ່ນຍັງຢູ່ພາຍໃຕ້ການປັບປຸງ ແລະ ຈະລວມເອົາໄວ້ໃນບົດນີ້ ຂອງມາດຕະຖານແຫ່ງຊາດໃນຂັ້ນຕອນຕໍ່ໜ້າ.

ການປະຕິບັດການປະເມີນຜົນພາຍຫຼັງການເກັບກູ້ໃນຂັ້ນຕອນການປະຕິບັດງານ ຈະໄດ້ຖືກປະຕິບັດໂດຍບັນດາອົງການເກັບກູ້ລະເບີດ ແລະ ອາດຈະແມ່ນໜ່ວຍງານທີ່ກ່ຽວຂ້ອງຂອງ ຄຊກລ. ການປະເມີນຜົນພາຍ ຫຼັງການເກັບກູ້ ໂດຍບັນດາອົງການເກັບກູ້ລະເບີດກໍ່ແມ່ນມີຜົນບັງຄັບໃຊ້.

ການປະເມີນຜົນພາຍຫຼັງການເກັບກູ້ ຄວນຈະປະຕິບັດໂດຍອົງການເກັບກູ້ລະເບີດຢ່າງຕ່ຳສຸດພາຍໃນ 6 ເດືອນ ແຕ່ບໍ່ໃຫ້ແກ່ຍາວເກີນ 8 ເດືອນ ພາຍຫຼັງທີ່ເນື້ອທີ່ດິນໄດ້ອະນຸຍາດໃຫ້ນຳໃຊ້. ການແກ່ຍາວເວລາ 6 ເດືອນນີ້ ກໍເພື່ອໃຫ້ມີເວລາພຽງພໍໃຫ້ວຽກງານໃດໜຶ່ງໄດ້ເລີ່ມຕົ້ນປະຕິບັດໃນເນື້ອທີ່ດິນນັ້ນ.

ການປະເມີນຜົນພາຍຫຼັງການເກັບກູ້ ບໍ່ຄວນດຳເນີນການກວດກາພື້ນທີ່ດິນຕົວຈິງ. ຂໍ້ມູນສຳລັບການປະເມີນຜົນພາຍຫຼັງການເກັບກູ້ ຄວນຈະໄດ້ມາຈາກການກວດກາພື້ນທີ່ດິນດ້ວຍຕາເປົ່າ ແລະ ປຶກສາຫາລືນຳຊຸມຊົນທ້ອງຖິ່ນ, ເຈົ້າຂອງ ຫຼື ຜູ້ນຳໃຊ້ດິນ, ອົງການມະນຸດສະທຳ ແລະ ອົງການພັດທະນາຕ່າງໆ ຫຼື ອຳນາດການປົກຄອງທ້ອງຖິ່ນກ່ຽວຂ້ອງຕາມທີ່ເຫັນສົມຄວນ.

ເມື່ອການປະເມີນຜົນພາຍຫຼັງການເກັບກູ້ ກວດພົບຂໍ້ຂາດຕົກບົດພ່ອງດ້ານຄຸນນະພາບຂອງການເກັບກູ້ທີ່ໄດ້ປະຕິບັດນັ້ນ, ອົງການເກັບກູ້ລະເບີດກ່ຽວຂ້ອງຄວນຈະນຳໃຊ້ມາດຕະການພາຍໃນທີ່ເໝາະສົມ ເພື່ອປ້ອງກັນບໍ່ໃຫ້ຂໍ້ຂາດຕົກບົກພ່ອງນັ້ນເກີດຂຶ້ນອີກ ພ້ອມທັງນຳໃຊ້ມາດຕະການຕ່າງໆເພື່ອແກ້ໄຂຂໍ້ຂາດຕົກບົກພ່ອງນັ້ນດ້ວຍ.

## 8. ການລາຍງານຂໍ້ມູນກ່ຽວກັບການປະເມີນຜົນພາຍຫຼັງການເກັບກູ້

ຂໍ້ມູນການປະເມີນຜົນພາຍຫຼັງການເກັບກູ້ສຳລັບແຕ່ລະໜ້າວຽກເກັບກູ້ທີ່ຈະລາຍງານໄດ້ລະບຸຢູ່ໃນ **"ບົດລາຍງານການປະເມີນຜົນພາຍຫຼັງການເກັບກູ້"**, ສຳເນົາບົດລາຍງານດັ່ງກ່າວໄດ້ກຳນົດໄວ້ໃນ ເອກະສານສະໜັບ ສະໜູນມາດຕະຖານແຫ່ງຊາດ ວ່າດ້ວຍ "**ລະບຽບການບໍລິຫານຄຸ້ມຄອງຄຸນນະພາບຂອງ ຄຊກລ ແຫ່ງ ສປປລາວ**".
ເມື່ອໄດ້ເຮັດການປະເມີນຜົນພາຍຫຼັງການເກັບກູ້ແລ້ວ ສຳເນົາຂອງ **"ບົດລາຍງານການປະເມີນຜົນພາຍຫຼັງການເກັບກູ້"** ຄວນຈະສົ່ງໃຫ້ ຄະນະກຳມະການປະສານງານດ້ານ ລບຕ ຂັ້ນແຂວງ ແລະ ຄຊກລ ໂດຍໃຫ້ສອດຄ່ອງກັບ

**ບົດທີ 24 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການບໍລິຫານຄຸ້ມຄອງຂໍ້ມູນຂ່າວສານ"**. ອົງການເກັບກູ້ລະເບີດທີ່ເກັບກູ້ເພື່ອສະໜັບສະໜູນໃຫ້ອົງການມະນຸດສະທຳ ຫຼື ອົງການພັດທະນາຕ່າງໆ ຄວນສົ່ງສຳເນົາບົດລາຍງານໃຫ້ອົງການທີ່ໃຫ້ການສະໜັບສະໜູນການເກັບກູ້ຂອງຕົນນຳ.

## 9. ການປະຕິບັດຕໍ່ຂໍ້ມູນການປະເມີນຜົນພາຍຫຼັງການເກັບກູ້

ຖ້າເນື້ອທີ່ດິນຫາກຖືກນຳໃຊ້ຕາມຈຸດປະສົງທີ່ກຳນົດໄວ້ ແລະ ບໍ່ມີບັນຫາກ່ຽວກັບຄຸນນະພາບຂອງການເກັບກູ້ ຈາກນັ້ນ, ຄຊກລ ຈະໄດ້ຮັບຮອງເອົາ **"ບົດລາຍງານການປະເມີນຜົນພາຍຫຼັງການເກັບກູ້"** ແລະ ເກັບຮັກສາຕົ້ນສະບັບຂອງບົດລາຍງານໄວ້.

ໃນກໍລະນີທີ່ການປະເມີນຜົນພາຍຫຼັງການເກັບກູ້ ຫາກພົບວ່າເນື້ອທີ່ດິນທີ່ເກັບກູ້ແລ້ວນັ້ນ ບໍ່ໄດ້ນຳໃຊ້ ຫຼື ນຳໃຊ້ບໍ່ຖືກຈຸດປະສົງທີ່ກຳນົດໄວ້ ຄຊກລ ຈະຕ້ອງນຳບັນຫາດັ່ງກ່າວມາປຶກສາຫາລືກັບອົງການເກັບກູ້ກ່ຽວຂ້ອງ ແລະ ອົງການໃດໜຶ່ງທີ່ອົງການເກັບກູ້ລະເບີດເຮັດວຽກໃຫ້.

ກໍລະນີການປະເມີນຜົນພາຍຫຼັງການເກັບກູ້ ຫາກພົບວ່າມີຂໍ້ຂາດຕົກບົກພ່ອງກ່ຽວກັບຄຸນນະພາບຂອງການເກັບກູ້ ຄຊກລ ຈະຕ້ອງບັນທຶກມາດຕະການທີ່ອົງການກ່ຽວຂ້ອງໄດ້ປະຕິບັດຕໍ່ກັບຄວາມບົກພ່ອງນັ້ນ. ຖ້າມາດຕະການທີ່ປະຕິບັດຫາກພິຈາລະນາເຫັນວ່າຖືກຕ້ອງເໝາະສົມ ກໍຕ້ອງໃຫ້ເຫດຜົນໃສ່ໃນບົດລາຍງານໄວ້. ແຕ່ຖ້າຫາກພິຈາລະນາເຫັນວ່າບໍ່ເໝາະສົມເທົ່າທີ່ຄວນ ຄຊກລ ຈະຕ້ອງນຳບັນຫາດັ່ງກ່າວສະເໜີຕໍ່ອົງການເກັບກູ້ທີ່ກ່ຽວຂ້ອງ ເພື່ອຊອກຫາວິທີແກ້ໄຂໃຫ້ຖືກຕ້ອງຕໍ່ໄປ.

ໃນທຸກກໍລະນີ ຖ້າມີການປະຕິບັດມາດຕະການໃດໜຶ່ງອັນເນື່ອງມາຈາກຜົນຂອງການປະເມີນຜົນພາຍຫຼັງການເກັບກູ້ ຄຊກລ ຈະຕ້ອງຊີ້ແຈ້ງໄວ້ໃນ **"ບົດລາຍງານການປະເມີນຜົນພາຍຫຼັງການເກັບກູ້"**.

## ເອກະສານຊ້ອນທ້າຍ ກ

## ຕົວກຳນົດການປ່ຽນແປງຕໍ່ມາດຕະການຜົນກະທົບມາຈາກການເກັບກູ້ລະເບີດ

ການປ່ຽນແປງຕໍ່ຄວາມເປັນຢູ່ທີ່ດີຂອງຊຸມຊົນ,ຕົວຢ່າງ:

ກ. ມີເນື້ອທີ່ດິນສຳລັບນຳໃຊ້ເຂົ້າໃນການຜະລິດ ແລະ ກໍ່ສ້າງເພີ່ມຂຶ້ນ.

ຂ. ເພີ່ມສະມັດຖະພາບການຜະລິດຂອງເນື້ອທີ່ດິນ ໂດຍຜ່ານລະບົບຊົນລະປະທານດີກວ່າເກົ່າ.

ຄ. ມີການຫັນປ່ຽນການນຳໃຊ້ດິນກວ້າງຂວາງຫຼາຍຂຶ້ນກວ່າເກົ່າ.

ງ. ກຳຈັດອຸປະສັກຕ່າງໆທີ່ມີຕໍ່ກິດຈະກຳປົກກະຕິປະຈຳວັນ.

ຈ. ຮູ້ສຶກມີຄວາມປອດໄພຫຼາຍຂຶ້ນລະຫວ່າງບຸກຄົນ ຕະຫຼອດເຖິງຄອບຄົວ ແລະ ຊັບສິນບັດຂອງ ເຂົາເຈົ້າ (ສັດລ້ຽງຕ່າງໆ).

ສ. ມີສະບຽງອາຫານມີຄວາມໝັ້ນຄົງຫຼາຍຂຶ້ນ.

ຊ. ມີການປັບປຸງໂຄງລ່າງການຄົມມະນາຄົມຂົນສົ່ງ.

ຍ. ເຂົ້າເຖິງການບໍລິການດ້ານຕ່າງໆຫຼາຍຂຶ້ນ ເຊັ່ນ ໄຟຟ້າ, ລະບົບນ້ຳອຸປະໂພກ ແລະ ບໍລິໂພກ, ລະບົບ ສື່ສານ ແລະ ອື່ນໆ.

ດ. ມີການພັດທະນາທ້ອງຖິ່ນ ເຊັ່ນ: ໂຮງຮຽນ, ຕະຫຼາດ, ສິ່ງອຳນວຍຄວາມສະດວກໃນຊຸມຊົນ ຫຼື ອຸດສະຫະ ກຳຕ່າງໆ.

ຕ. ສ້າງໂອກາດໃນການຊອກວຽກເຮັດງານທຳຫຼາຍຂຶ້ນ.

ການກຳນົດປະລິມານຜົນປະໂຫຍດຂອງການເກັບກູ້ ທີ່ມີຕໍ່ຊຸມຊົນ ຕົວຢ່າງເຊັ່ນ:

ກ. ມີເນື້ອທີ່ດິນທີ່ນຳໃຊ້ (ເປັນຕາຕະລາງແມັດ) ເພີ່ມຂຶ້ນ.

ຂ. ຜົນຜະລິດຈາກກະສິກຳເພີ່ມຂຶ້ນ.

ຄ. ມີການປະຕິບັດກິດຈະກຳຕ່າງໆດ້ານກະສິກຳເພີ່ມຂຶ້ນ.

ງ. ຫຼຸດຜ່ອນການໃຊ້ເວລາ ຫຼື ໄລຍະໃນການປະຕິບັດວຽກງານປົກກະຕິ.

ຈ. ການເພີ່ມຂຶ້ນຂອງການສະໜອງສະບຽງອາຫານແຕ່ລະປີ.

ສ. ການປ່ຽນແປງຂອງຈຳນວນຄອບຄົວທີ່ໄດ້ຮັບການບໍລິການຕ່າງໆຫຼາຍຂຶ້ນ.

ຊ. ລາຍຮັບໃນຄອບຄົວມີການເພີ່ມຂຶ້ນ.

ຍ. ຈຳນວນບຸກຄົນ ແລະ ຄອບຄົວທີ່ໄດ້ຮັບຜົນປະໂຫຍດ ແລະ ປະເພດຜົນປະໂຫຍດທີ່ໄດ້ຮັບ.

ດ. ຜົນປະໂຫຍດດ້ານເສດຖະກິດ-ສັງຄົມໃດໜຶ່ງທີ່ມີຕໍ່ຊຸມຊົນ ທີ່ສາມາດວັດແທກໄດ້.